ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----=====000=====-----

ສຳນັກງານ ຄຄຊ

ພະແນກຄຸ້ມຄອງຕະຫຼາດຫຼັກຊັບ                                        ນະຄອນຫຼວງວຽງຈັນ, ວັນທີ 08 ກຸມພາ 2017

ຮຽນ: ທ່ານ ຫົວໜ້າສຳນັກງານ ຄຄຊ ທີ່ນັບຖື,

(ໂດຍຜ່ານການປະກອບຄຳເຫັນຂອງທ່ານ ນາງ ນະຄອນສີ ມະໂນທັມ ຮອງຫົວໜ້າສຳນັກງານ ຄຄຊ)

ເລື່ອງ: ລາຍງານກ່ຽວກັບ ການສ້າງຕັ້ງຕະຫຼາດຫຼັກຊັບ ອອນໄລ ALLIEDSX ສຳລັບທຸລະກິດເກີດໃໝ່ (Start up).

- ອີງຕາມທິດຊີ້ນຳຂອງ ທ່ານ ຮອງຫົວໜ້າສຳນັກງານ ຄຄຊ ລົງວັນທີ 08 ກຸມພາ 2017;
- ອີງຕາມຂໍ້ມູນເວບໄຊ້ www.ryt9.com;
- ອີງຕາມ ຂໍ້ມູນເວບໄຊ້ www.alliedsx.com.

ພະແນກຄຸ້ມຄອງຕະຫຼາດຫຼັກຊັບ ໜ່ວຍງານຕິດຕາມການຊື້-ຂາຍຫຼັກຊັບ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບ ກ່ຽວກັບ ການສ້າງຕັ້ງຕະຫຼາດຫຼັກຊັບ ອອນໄລ ALLIEDSX ສຳລັບທຸລະກິດກຸ່ມທຸລະກິດເກີດໃໝ່ (Start up) ທີ່ສ້າງຕັ້ງໃໝ່ ທີ່ມີສັກກະຍາພາບ ແລະ ໂອກາດໂດຍມີລາຍລະອຽດ ດັ່ງນີ້:

1. ຂໍ້ມູນກ່ຽວກັບ ALLIEDSX

ALLIEDSX ແມ່ນຖືກສ້າງຕັ້ງຂຶ້ນເປັນ ບໍລິສັດເອກະຊົນ ຈຳກັດ (Private Limited Company) ແລະ ຈົດທະບຽນໃນປະເທດ ອັງກິດ ໃນປີ 2016 ໂດຍມີທ່ານ Edward James Fitzpatrick (ຄົນອັງກິດ) ເປັນເຈົ້າຂອງບໍລິສັດ ເຊິ່ງດຳເນີນທຸລະກິດກ່ຽວກັບລະບົບໄອທີ ເຊິ່ງຖືວ່າເປັນທຸລະກິດປະເພດ Fin Tech ປະເພດໜຶ່ງ ໂດຍມີເປົ້າໝາຍແນໃສ່ໃນການເຮັດທຸລະກຳທາງການລົງທຶນ-ລະດົມທຶນລະຫວ່າງບໍລິສັດເກີດໃໝ່ (Start Up) ກັບຜູ້ລົງທຶນທີ່ມີຄວາມສົນໃຈລົງທຶນກັບບໍລິສັດດັ່ງກ່າວ, ໂດຍກຸ່ມບໍລິສັດເປົ້າໝາຍຂອງ ALLIEDSX ແມ່ນບັນດາບໍລິສັດຂະໜາດກາງ-ນ້ອຍ ແລະ ບັນດາບໍລິສັດເກີດໃໝ່ທີ່ບໍ່ຜ່ານເງື່ອນໄຂການເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ ເຊິ່ງ ALLIEDSX ໄດ້ວາງເງື່ອນໄຂ ແລະ ກົດເກນທີ່ຜ່ອນຄາຍກວ່າເພື່ອໃຫ້ບັນດາບໍລິສັດດັ່ງກ່າວສາມາດເຂົ້າໄປລະດົມທຶນໄດ້ດ້ວຍລະບົບ ແລະ ຂັ້ນຕອນທີ່ທາງ ALLIEDSX ກຳນົດໄວ້ (ເອກະສານຕິດຄັດ) ເຊິ່ງ ເງື່ອນໄຂຂອງບໍລິສັດທີ່ຈະຈົດທະບຽນນັ້ນຈະປະກອບດ້ວຍ ການປະກອບເອກະສານພາບລວມຂອງທຸລະກິດ ເພື່ອໃຫ້ທາງ ALLIEDSX ກວດສອບກ່ອນ ຫາກຜ່ານການພິຈາລະນາຈຶ່ງຈັດສົ່ງແຜນທຸລະກິດ ແລະ ເອກະສານງົບການເງິນ ເພື່ອເຂົ້າສູ່ຂັ້ນຕອນພິຈາລະນາໃນຮອບຖັດໄປ ແລະ ເມື່ອຜ່ານການພິຈາລະນາໃນຂັ້ນຕອນນີ້ແລ້ວ ALLIEDSX ກໍ່ຈະຮ່ວມຊ່ວຍເຮັດໜັງສືຊວນຊື້ໃຫ້ ເຊິ່ງໃນຊ່ວງນີ້

ເອກະສານທາງນິຕິກຳທີ່ຕິດພັນການຈົດທະບຽນຈະຖືກທົບທວນ ເຊິ່ງຖືວ່າເປັນຂັ້ນຕອນສຸດທ້າຍກ່ອນການເຂົ້າຈົດທະບຽນ ແລະ ສາມາດເລີ່ມການຂາຍຮຸ້ນໄດ້; ໃນສ່ວນຂອງ ຜູ້ລົງທຶນທີ່ມີຄວາມສົນໃຈນັ້ນ ຈະຕ້ອງທຳການເປີດບັນຊີ ແລະ ເຮັດແບບສອບຖາມ KYC ກ່ອນ ຈາກນັ້ນ ALLIEDSX ຈະເຮັດການກວດສອບ ID ແລະ ທີ່ຢູ່ຂອງ ຜູ້ລົງທຶນທີ່ສະໝັກ ເພື່ອກວດສອບພູມຫຼັງຕ່າງໆ ຈາກນັ້ນຈຶ່ງປະເມີນຜູ້ລົງທຶນວ່າ ເປັນກຸ່ມທີ່ສາມາດຮັບຄວາມສ່ຽງໄດ້ໜ້ອຍຫຼາຍພຽງໃດ ກ່ອນຈຶ່ງຈະອານຸມັດບັນຊີຜູ້ລົງທຶນໃຫ້ ຈາກນັ້ນ ຜູ້ລົງທຶນຕ້ອງເປີດບັນຊີທຶນ ທີ່ຈະໃຊ້ຊື້-ຂາຍຫຼັກຊັບ ຈຶ່ງຈະສາມາດເລີ່ມການຊື້-ຂາຍຫຼັກຊັບໄດ້. ເພື່ອໃຫ້ລະບົບການດຳເນີນທຸລະກິດຕົນມີປະສິດທິພາບ ແລະ ມີຄວາມໜ້າເຊື່ອຖືຂຶ້ນ ໃນວັນທີ 7 ກຸມພາ 2017 ALLIEDSX ໄດ້ປະກາດການຖືກຳມະສິດທັງໝົດໃນຂໍ້ຕົກລົງດ້ານການຖ່າຍທອດເຕັກໂນໂລຍີ ດ້ວຍມູນຄ່າ 250 ລ້ານປອນ ຫຼື 300 ລ້ານໂດລ້າສະຫະລັດ ເພື່ອເປີດຕົວລະບົບຊື້-ຂາຍຫຼັກຊັບ ດິຈິຕອນ ISEG/ALLIEDSX “Digital Stock Exchange Platform” ໃນ 50 ປະເທດທົ່ວໂລກ (ເຊິ່ງໃນປະຈຸບັນ ທາງ ALLIEDSX ກໍ່ຍັງບໍ່ໄດ້ຊີ້ແຈງລາຍລະອຽດລົງເລິກຕ່າງໆເທົ່າທີ່ຄວນນອກຈາກ ການເຮັດ ຄິບວີດີໂອສັ້ນ ໃນການອະທິບາຍລາຍລະອຽດຂອງ ALLIEDSX ເທົ່ານັ້ນ ແຕ່ຍັງບໍ່ມີເອກະສານປະກອບ ແລະ ຂໍ້ມູນຂ່າວສານເພີ່ມເຕີມຈາກນີ້ເທື່ອ).

2. ຄຳເຫັນວິຊາການ

ALLIEDSX ແມ່ນເປັນອີກຕົວຢ່າງໜຶ່ງຂອງ ຕະຫຼາດທຶນກັບການຫັນສູ່ໂລກຂອງເຕັກໂນໂລຍີ ຫຼື FIN TECH ທີ່ສະທ້ອນໃຫ້ເຫັນການຫັນປ່ຽນຮູບແບບການເຮັດທຸລະກຳທາງການເງິນ ທີ່ສາມາດພັດທະນາເຂົ້າສູ່ຮູບແບບຂອງການເຮັດທຸລະກຳຂອງຕະຫຼາດທຶນໄດ້ແລ້ວ ແລະ ຕາມການຊີ້ແຈງຂອງປະທານບໍລິສັດ ທ່ານ Edward James Fitzpatrick ແມ່ນເຫັນວ່າ ALLIEDSX ແມ່ນຮູບແບບຂອງການພັດທະນາ ແລະ ຕໍ່ຍອດຂອງ Crowdfund ນັ້ນເອງ. ຈາກຮູບແບບ ແລະ ແຜນການ ການໃຫ້ບໍລິການຂອງ ALLIEDSX ແມ່ນເຫັນວ່າ ເປັນຮູບແບບຂອງການໝຸນເອົາລະບົບເຕັກໂນໂລຍີມາຫັນໃສ່ກັບວຽກງານຕະຫຼາດທຶນທີ່ໜ້າສົນໃຈ ເຖິງແມ່ນວ່າ ໃນປະຈຸບັນ ວຽກງານ ແລະ ທິດທາງຂອງ FIN TECH ໃນ ສປປ ລາວ ແລະ ຕະຫຼາດທຶນລາວ ເຮົາຍັງບໍ່ມີທ່າແຮງ ແລະ ໜໍ່ແໜງທີ່ມີທ່າແຮງ-ຊັດເຈນເທື່ອກໍ່ຕາມ ແຕ່ໃນອານາຄົດ ການນຳໃຊ້ FIN TECH ໃນລັກສະນະຂອງ ALLIEDSX ຈະມີບົດບາດສຳຄັນຕໍ່ກັບບັນດາຕະຫຼາດຫຼັກຊັບໃນອາຊຽນ ທີ່ອາດຕ້ອງປັບປຸງ-ຫັນປ່ຽນ ແລະ ພັດທະນາຕົນໃຫ້ທັນຕໍ່ກັບການຫັນປ່ຽນຂອງໂລກາພິວັດທາງເຕັກໂນໂລຍີດັ່ງກ່າວນີ້ ບໍ່ດັ່ງນັ້ນ ກໍ່ອາດມີຄວາມເປັນໄປໄດ້ວ່າ FIN TECH ແບບຂອງ ALLIEDSX ຈະກາຍເປັນທາງເລືອກໃນການລະດົມທຶນຂອງທຸລະກິດ Start Up ແລະ SMEs ທີ່ເປັນທາງເລືອກໃໝ່ນອກເໜືອຈາກ ຕະຫຼາດຫຼັກຊັບ ຄືດັ່ງທີ່ຜ່ານມາ ເຊິ່ງນັ້ນກໍ່ຈະໝາຍຄວາມໄດ້ວ່າ FIN TECH ແບບຂອງ ALLIEDSX ກໍ່ຈະກາຍເປັນຄູ່ແຂ່ງໂດຍທາງອ້ອມໃນປະຈຸບັນ ແລະ ຈະເປັນຄູ່ແຂ່ງໂດຍກົງໃນອານາຄົດຂອງບັນດາຕະຫຼາດຫຼັກຊັບໄດ້ເຊັ່ນກັນ ຫາກພິຈາລະນາຕາມຫຼັກການ Five Force Model ຂອງ ສາດສະດາຈານ Michael E Porter.

ດັ່ງນັ້ນ, ຈຶ່ງຂໍຮຽນລາຍງານທ່ານເພື່ອຊາບ ແລະ ມີທິດຊີ້ນຳຕາມຄວາມເໝາະສົມດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຮັກສາການຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ

ຜູ້ລາຍງານ




We have also documented the entire process and provide a suite of documents that allow for any and every eventuality.